ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

237

ແຂວງ ບໍລິຄໍາໄຊ

ເລກທີ............./ຂບຊ

ບໍລິຄໍາໄຊ,ວັນທີ 28 MAR 2018

# ຂໍ້ຕົກລົງ

## ຂອງເຈົ້າແຂວງບໍລິຄໍາໄຊ

## ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາໃນເຂດຊົນລະປະທານ

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 19 / ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ14ທັນວາ2015.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມສະພາສະບັບເລກທີ 103/ສພຂ.ບຊ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມ ມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ສະພາປະຊາຊົນແຂວງ ບໍລິຄໍາໄຊ ຊຸດທີ I ຄັ້ງວັນທີ 25 ມັງກອນ 2018.

## ເຈົ້າແຂວງບໍລິຄໍາໄຊ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ,ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາໃນເຂດຊົນລະປະທານເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບຮັບປະກັນການຈັດສັນແບ່ງເຂດທີ່ດິນກະສິກໍາ, ການແບ່ງຄວາມຮັບຜິດຊອບໃຫ້ຂະແໜງການທີ່ກ່ຽວຂ້ອງໃນການຄຸ້ມຄອງທີ່ດິນກະສິກໍາໃນເຂດຊົນລະປະທານໃຫ້ເຂົ້າສູ່ລະບຽບການ, ແນ່ໃສ່ປົກປັກຮັກສາ, ການຄຸ້ມຄອງ, ການພັດທະນາ ແລະ ການຫັນປ່ຽນປະເພດທີ່ດິນກະສິກໍາໃນເຂດຊົນລະປະທານໃຫ້ສອດຄ່ອງກັບລະບຽບກົດໝາຍ, ປະຕິບັດຕາມທິດຍືນຍົງ ແລະ ສີຂຽວປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມຂອງແຂວງ ແລະ ຂອງຊາດ.

**ມາດຕາ 2. ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.**

**ການຄຸ້ມຄອງທີ່ດິນກະສິກຳໃນເຂດຊົນລະປະທານ** ແມ່ນຂະບວນການທີ່ເຮັດໃຫ້ດິນໄດ້ຮັບການປົກປັກຮັກສາ, ຈັດສັນ ແລະ ການພັດທະນາຢ່າງມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ ຖືກຕ້ອງຕາມເປົ້າໝາຍໃນການຢັ້ງຢືນສິດນຳໃຊ້ທີ່ດິນກະສິກຳໃນເຂດຊົນລະປະທານດ້ວຍການເກັບກຳຂໍ້ມູນຂ່າວສານ, ວາລະສານຕ່າງໆ, ວາງລະບຽບການ, ກຳນົດມາດຕະການໃນການຄຸ້ມຄອງ, ກວດກາ ແລະ ປະເມີນຜົນກະທົບດ້ານສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;

**ການພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ** ແມ່ນການລົງທຶນດ້ວຍແຮງງານ, ວັດຖຸ, ທຶນຮອນ, ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ເພື່ອເຮັດໃຫ້ດິນມີຄຸນນະພາບດີໃຫ້ແທດເໝາະກັບການນຳໃຊ້ທີ່ດິນແຕ່ລະປະເພດ, ເຮັດໃຫ້ສະມັດຕະພາບການຜະລິດ ແລະ ທີ່ດິນມີມູນຄ່າເພີ່ມຂຶ້ນ.

**ມາດຕາ 3. ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:**

1. **ດິນກະສິກຳໃນເຂດຊົນລະປະທານ:** ໝາຍເຖິງດິນກະສິກຳທີ່ນອນໃນເຂດເນື້ອທີ່ ທີ່ມີລະບົບຊົນລະປະທານສາມາດສະໜອງນ້ຳ ແລະ ລະບາຍນ້ຳໃນເນື້ອທີ່ດັ່ງກ່າວໄດ້;

2. **ການກຳນົດ:** ໝາຍເຖິງການກຳນົດຂອບເຂດ, ປະເພດການນຳໃຊ້ທີ່ດິນກະສິກຳຕາມຈຸດພິເສດ, ເງື່ອນໄຂຕົວຈິງເພື່ອວາງແຜນນຳໃຊ້ ແລະ ຄຸ້ມຄອງຢ່າງມີປະສິດທິຜົນ;

3. **ການຄຸ້ມຄອງທີ່ດິນກະສິກຳໃນເຂດຊົນລະປະທານ:** ໝາຍເຖິງການຈັດສັນ, ການພັດທະນາ, ການປົກປັກຮັກສາໂດຍການວາງລະບຽບກຳນົດການນຳໃຊ້ທີ່ດິນກະສິກຳ ໃຫ້ມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ ແລະ ຖືກຕ້ອງຕາມເປົ້າໝາຍ;

4. **ການພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ:** ໝາຍເຖິງການປົກປັກຮັກສາ ແລະ ປັບປຸງທີ່ດິນດ້ວຍການລົງທຶນດ້ານແຮງງານ, ວັດຖຸ, ທຶນຮອນ, ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ເພື່ອເຮັດໃຫ້ດິນມີຄຸນນະພາບດີໃຫ້ແທດເໝາະກັບການນຳໃຊ້ທີ່ດິນແຕ່ລະປະເພດ, ເຮັດໃຫ້ສະມັດຕະພາບການຜະລິດ ແລະ ທີ່ດິນມີມູນຄ່າເພີ່ມຂຶ້ນ;

5. **ເຂດຊົນລະປະທານ:** ໝາຍເຖິງເຂດລະບົບການສະໜອງນ້ຳ ແລະ ການລະບາຍນ້ຳ ເພື່ອການຜະລິດກະສິກຳຊຶ່ງປະກອບດ້ວຍລະບົບຫົວງານ, ລະບົບທົດປ້ອງກັນແຫ້ງ ແລະ ລະບົບທົດປ້ອງກັນຖ້ວມ;

6. **ການຫັນປ່ຽນທີ່ດິນກະສິກຳໃນເຂດຊົນລະປະທານ:** ໝາຍເຖິງການຫັນປ່ຽນທີ່ດິນກະສິກຳໄປເປັນທີ່ດິນປະເພດອື່ນໆ;

7. **ສິດໃຊ້ທີ່ດິນໃນເຂດຊົນລະປະທານ:** ໝາຍເຖິງສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດໃຊ້ທີ່ດິນ, ບໍ່ສາມາດແລກປ່ຽນ, ຊື້-ຂາຍໄດ້, ມີແຕ່ສິດປົກປັກຮັກສາ, ສິດໃຊ້ທີ່ດິນ, ສິດໄດ້ຮັບໝາກຜົນຈາກທີ່ດິນ ແລະ ສິດສືບທອດມູນມໍລະດົກເທົ່ານັ້ນ;

8. **ກຳມະສິດນຳໃຊ້ທີ່ດິນໃນເຂດຊົນລະປະທານ:** ໝາຍເຖິງສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ທີ່ດິນຖາວອນໂດຍມີໃບຕາດິນເຊິ່ງແມ່ນເອກະສານທີ່ເປັນຫຼັກຖານກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນຊຶ່ງໄດ້ມາຈາກການມອບ, ການແລກປ່ຽນ, ການຊື້-ຂາຍ ແລະ ການສືບທອດມູນມໍລະດົກ, ສິດນຳໃຊ້ທີ່ດິນປະກອບດ້ວຍ ສິດປົກປັກຮັກສາ, ສິດໃຊ້ທີ່ດິນ, ສິດໄດ້ຮັບໝາກຜົນຈາກທີ່ດິນ, ສິດໂອນສິດນຳໃຊ້ທີ່ດິນ ແລະ ສິດສືບທອດສິດນຳໃຊ້;

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.**

ນະໂຍບາຍຂອງລັດກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານມີດັ່ງນີ້:

ລັດສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຜູ້ປະກອບການພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ນຳໃຊ້ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ ດ້ວຍການວາງນະໂຍບາຍວິທີການ ແລະ ມາດຕະການຕ່າງໆເຊັ່ນ: ການສຶກສາອົບຮົມ, ການສົ່ງເສີມການລົງທຶນດ້ານແຮງງານ, ວັດຖຸເຕັກໂນໂລຊີການກໍ່ສ້າງພື້ນຖານໂຄງລ່າງ ແລະ ການຄຸ້ມຄອງ-ບໍລິຫານທີ່ດິນ ເພື່ອເຮັດໃຫ້ດິນມີຄຸນນະພາບດີ ແລະ ມີມູນຄ່າເພີ່ມຂຶ້ນ;

ລັດປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນກະສິກຳ ໃນເຂດຊົນລະປະທານໃຫ້ມີຄວາມສະຫງົບ ແນໃສ່ຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ;

ລັດສົ່ງເສີມໃຫ້ມີການຈັດຕັ້ງເປັນກຸ່ມການຜະລິດກະສິກຳ ເພື່ອຊຸກຍູ້ສົ່ງເສີມການຜະລິດຂອງຊາວກະສິກອນຂະໜາດນ້ອຍໃຫ້ເຂັ້ມແຂງ, ກຽມພ້ອມກ້າວຂຶ້ນເປັນສະຫະກອນການຜະລິດ, ສ້າງລາຍຮັບ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ, ແນໃສ່ແກ້ໄຂຄວາມທຸກຍາກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ຂອງຊາດ.

**ມາດຕາ 5. ວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ**

**ວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານຕາມຫຼັກການພື້ນຖານມີດັ່ງນີ້:**

1. ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍທີ່ກ່ຽວຂ້ອງ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ແລະ ແຂວງທີ່ວາງອອກໃນແຕ່ລະໄລຍະ;

2. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທຸກຂັ້ນໃນການຄຸ້ມຄອງນຳໃຊ້ທີ່ດິນກະສິກຳໃນເຂດຊົນລະປະທານ, ຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫົວໜ່ວຍການຜະລິດທັງພາຍໃນ ແລະ ຕ່າງປະເທດ, ຕ້ອງມີຄວາມໂປ່ງໃສ, ຍຸຕິທຳ ແລະ ສະເໝີພາບທົ່ວສັງຄົມ.

**ມາດຕາ 6. ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ສະເພາະບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ດຳເນີນທຸລະກິດທັງພາຍໃນ ແລະ ຕ່າງປະເທດຢູ່ໃນດິນກະສິກຳໃນເຂດຊົນລະປະທານ ຢູ່ພາຍໃນແຂວງບໍລິຄຳໄຊເທົ່ານັ້ນ.

## ໝວດທີ II
## ທີ່ດິນກະສິກຳໃນເຂດຊົນລະປະທານ

**ມາດຕາ 7. ດິນກະສິກຳໃນເຂດຊົນລະປະທານ.**

ດິນກະສິກຳໃນເຂດຊົນລະປະທານແມ່ນດິນກະສິກຳທີ່ນອນໃນເຂດເນື້ອທີ່ທີ່ມີລະບົບຊົນລະປະທານສາມາດສະໜອງນ້ຳ ແລະ ລະບາຍນ້ຳ ໃນເນື້ອທີ່ໄດ້ໂດຍໄດ້ຮັບການສຳຫຼວດ, ຈັດສັນ ແລະ ຂຶ້ນສຳມະໂນ

ເພື່ອໃຫ້ມີເອກະສານຄຸ້ມຄອງການນໍາໃຊ້ເນື້ອທີ່ດິນກະສິກໍາໃນເຂດຊົນລະປະທານທີ່ມີແລ້ວໃນປັດຈຸບັນ ແລະ ໃນຕໍ່ໜ້າ;

ເນື້ອທີ່ດິນກະສິກໍາໃນເຂດຊົນລະປະທານທົ່ວແຂວງບໍລິຄໍາໄຊໄດ້ກໍານົດໄວ້ໃນສະຖິຕິຂອງຊົນລະປະທານ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ.

**ມາດຕາ 8. ປະເພດທີ່ດິນກະສິກໍາໃນເຂດຊົນລະປະທານ.**

ປະເພດທີ່ດິນກະສິກໍາໃນເຂດຊົນລະປະທານມີ 4 ປະເພດດັ່ງນີ້:

1. **ດິນປູກຝັງ** ແມ່ນດິນທີ່ກໍານົດໄວ້ເພື່ອນໍາໃຊ້ເຂົ້າໃນການປູກພືດເຊັ່ນ: ເຂົ້າ ແລະ ພືດສວນອື່ນໆ;

2. **ດິນລ້ຽງສັດ** ແມ່ນດິນທີ່ກໍານົດໄວ້ເພື່ອລ້ຽງສັດ ແລະ ປູກຫຍ້າລ້ຽງສັດ;

3. **ດິນຊົນລະປະທານ** ແມ່ນດິນທີ່ກໍານົດໄວ້ເພື່ອສ້າງລະບົບຊົນລະປະທານເຊັ່ນ: ລະບົບຫົວງານ ແລະ ລະບົບຄອງເໝືອງ;

4. **ດິນຄົ້ນຄວ້າທົດລອງ** ແມ່ນດິນທີ່ກໍານົດໄວ້ເພື່ອການຄົ້ນຄວ້າທົດລອງເຊັ່ນ: ການທົດລອງກ່ຽວກັບການປູກພືດ, ການທົດລອງກ່ຽວກັບການປູກຫຍ້າລ້ຽງສັດ ແລະ ອື່ນໆ.

## ໝວດທີ III
## ການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກໍາໃນເຂດຊົນລະປະທານ

**ມາດຕາ 9. ການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນກະສິກໍາໃນເຂດຊົນລະປະທານ.**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດມີຈຸດປະສົງຈະລົງທຶນນໍາໃຊ້ທີ່ດິນກະສິກໍາໃນເຂດຊົນລະປະທານທີ່ກໍານົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ຂໍອະນຸຍາດການນໍາໃຊ້ຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ ໂດຍຜ່ານຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເປັນຜູ້ຄົ້ນຄວ້າຕາມກົດໝາຍ ແລະ ລະບຽບການ;

ທີ່ດິນກະສິກໍາໃນເຂດຊົນລະປະທານ ທີ່ຍັງນໍາໃຊ້ໄດ້ແຕ່ບໍ່ທໍາການຜະລິດ ຫຼື ປະເປີນເຊື້ອ ຕ້ອງໃຫ້ຜູ້ອື່ນທໍາການຜະລິດໃສ່ໂດຍບໍ່ເສຍຄ່າແຕ່ຕ້ອງຜະລິດຕາມເຕັກນິກໃໝ່, ພາຍຫຼັງສໍາເລັດລະດູທໍາການຜະລິດແລ້ວຕ້ອງອະ ນາໄມສິ່ງເສດເຫຼືອ ຈາກລະດູການຜ່ານມາ ໃຫ້ມີຄວາມສະດວກໃນການຜະລິດລະດູການຕໍ່ໄປພ້ອມທັງຈ່າຍຄ່ານໍ້າ, ຄ່າໄຟຟ້າ ແລະ ພັນທະອື່ນໆໃຫ້ຄົບຖ້ວນ;

ສໍາລັບຜູ້ທີ່ມີດິນກະສິກໍາໃນເຂດຊົນລະປະທານ ເພື່ອຜະລິດກະສິກໍາ ແບບຄອບຄົວ ແມ່ນບໍ່ໄດ້ຂໍອະນຸ ຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 10. ການຂໍອະນຸຍາດການຄຸ້ມຄອງ, ການນໍາໃຊ້ ແລະ ພັດທະນາທີ່ດິນກະສິກໍາໃນເຂດຊົນລະປະທານ.**

ການຂໍອະນຸຍາດຄຸ້ມຄອງ ແລະ ນໍາໃຊ້ທີ່ດິນກະສິກໍາໃນເຂດຊົນລະປະທານ ເພື່ອການລົງທຶນຕ້ອງປະກອບດ້ວຍເອກະສານດັ່ງນີ້:

1. ໃບສະເໜີການລົງທຶນ; ຄະນະຄຸ້ມຄອງການລົງທຶນແຂວງ;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ບົດສຶກສາຜົນກະທົບທາງດ້ານສິ່ງແວດລ້ອມເບື້ອງຕົ້ນ;
4. ໃບອະນຸຍາດດໍາເນີນທຸລະກິດ;
5. ໃບທະບຽນວິສະຫະກິດ;

6. ໃບແຈ້ງເສຍພາສີອາກອນ;

7. ບົດລາຍງານການເຄື່ອນໄຫວຜ່ານມາຂອງຜູ້ລົງທຶນ (ຖ້າມີ);

8. ບົດບັນທຶກກອງປະຊຸມ, ຄະນະຄຸ້ມຄອງການລົງທຶນແຂວງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງໃນການພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານຕ້ອງໄດ້ປະກອບເອກະສານຂ້າງເທິງ ສະເໜີຕໍ່ພະແນກກະສິກຳ ແລະ ປ່າໄມ້, ເພື່ອຄົ້ນຄ້ວາພິຈາລະນາ ມີຄຳຕອບໃຫ້ແກ່ຜູ້ສະເໜີກຳນົດ 5 ວັນລັດຖະການ, ກ່ຽວກັບການປັບປຸງທີ່ດິນດ້ວຍການລົງທຶນດ້ານແຮງງານ, ວັດຖຸ, ທຶນຮອນ, ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ເພື່ອເຮັດໃຫ້ດິນມີຄຸນນະພາບດີໃຫ້ແທດເໝາະກັບການນຳໃຊ້ທີ່ດິນແຕ່ລະປະເພດ, ເຮັດໃຫ້ສະມັດຕະພາບການຜະລິດ ແລະ ທີ່ດິນມີມູນຄ່າເພີ່ມຂຶ້ນ;

**ມາດຕາ 11. ເງື່ອນໄຂຂອງການຫັນປ່ຽນປະເພດທີ່ດິນກະສິກຳໃນເຂດຊົນລະປະທານ.**

**ເງື່ອນໄຂຂອງການຫັນປ່ຽນປະເພດທີ່ດິນກະສິກຳໃນເຂດຊົນລະປະທານມີດັ່ງນີ້:**

**1. ເງື່ອນໄຂຂອງການຫັນປ່ຽນປະເພດທີ່ດິນກະສິກຳໃນເຂດຊົນລະປະທານ.**

- ຕ້ອງໄດ້ຮັບຜົນປະໂຫຍດສູງສຸດ;
- ນອນຢູ່ໃນແຜນພັດທະນາເສດຖະກິດຂອງຊາດ ແລະ ຂອງແຂວງ;
- ຜ່ານການເຫັນດີຂອງພາກສ່ວນທີ່ກ່ຽວຂ້ອງ;
- ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ.

**2. ການຫັນປ່ຽນປະເພດທີ່ດິນກະສິກຳໃນເຂດຊົນລະປະທານ.**

ພະແນກກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງໃນການນຳສະເໜີຂັ້ນເທິງພິຈາລະນາການອອກອະນຸຍາດຫັນປ່ຽນປະເພດທີ່ດິນກະສິກຳໃນເຂດຊົນລະປະທານໄປເປັນດິນປະເພດອື່ນໂດຍການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເຊັ່ນ: ພະແນກແຜນການ-ການລົງທຶນ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້;

ຜູ້ທີ່ມີດິນກະສິກຳໃນເຂດຊົນລະປະທານ ສາມາດຫັນປ່ຽນເປັນດິນປຸກຖຽງນາໄດ້ໂດຍບໍ່ຂໍອະນຸຍາດໃນເນື້ອທີ່ບໍ່ເກີນ 50 ຕາແມັດ/ຄອບຄົວ.

**ມາດຕາ 12. ຄ່າທຳນຽມການຫັນປ່ຽນປະເພດດິນກະສິກຳໃນເຂດຊົນລະປະທານ ໄປເປັນດິນປະເພດອື່ນ.**

ການຫັນປ່ຽນທີ່ດິນກະສິກຳມາເປັນດິນປຸກສ້າງເພື່ອເປົ້າໝາຍທາງການຄ້າເຂດຕົວເມືອງ 2000 ກີບ/ຕາແມັດ, ເຂດຊານເມືອງ 1000 ກີບ/ຕາແມັດ ແລະ ເຂດຊົນນະບົດ 500ກີບ/ຕາແມັດ;

ການຫັນປ່ຽນທີ່ດິນກະສິກຳມາເປັນດິນປຸກສ້າງເພື່ອເປັນບ່ອນຢູ່ອາໃສສຳລັບຄອບຄົວເຂດຕົວເມືອງ 100ກີບ/ຕາແມັດ, ເຂດຊານເມືອງ 50 ກີບ/ຕາແມັດ, ເຂດຊົນນະບົດ 30 ກີບ/ຕາແມັດ;

ການກຳນົດຄ່າທຳນຽມຂ້າງເທິງນີ້ແມ່ນອີງໃສ່ລັດຖະບັນຍັດເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ມາດຕາ 81 ຄ່າທຳນຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນອີກປະເພດໜຶ່ງ.

## ໝວດທີ IV

## ອົງການຄຸ້ມຄອງວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ

ມາດຕາ 13. ອົງການຄຸ້ມຄອງວຽກງານຄຸ້ມຄອງ ແລະ ພັດທະນາດິນກະສິກຳ ໃນເຂດຊົນລະປະທານ.

ອົງການປົກຄອງແຂວງເປັນຜູ້ຊີ້ນຳ ວຽກງານຄຸ້ມຄອງແລະພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານຢ່າງລວມສູນເປັນເອກະພາບໃນທົ່ວແຂວງໂດຍມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວປະສົບຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍ, ຊຶ່ງປະກອບມີ 3 ພາກສ່ວນຄື:

1. ພະແນກກະສິກຳ ແລະ ປ່າໄມ້ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
3. ໜ່ວຍງານກະສິກຳບ້ານ.

ມາດຕາ 14. ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ.

**ພະແນກກະສິກຳ ແລະ ປ່າໄມ້ແຂວງໂດຍແມ່ນຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳເປັນເສນາທິການມີສິດ ແລະ ໜ້າທີ່ດັ່ງນີ້:**

1. ຄົ້ນຄ້ວາປະກອບຄຳເຫັນກ່ຽວກັບການລົງທຶນຂອງນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດທາງດ້ານທີ່ດິນກະສິກຳໃນເຂດຊົນລະປະທານບົນພື້ນຖານກົດໝາຍ ແລະ ລະບຽບການ;

2. ສະເໜີອະນຸມັດສ້າງຕັ້ງຫຼື ຍຸບເລີກກິດຈະການ ແລະ ການສ້າງຕັ້ງການຜະລິດກະສິກຳຕາມກົດໝາຍວ່າດ້ວຍການລົງທຶນຂອງ ສປປ ລາວ;

3. ດຳເນີນກວດກາຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກຳເພື່ອສັງລວມ, ວິໄຈ ແລະ ປະເມີນຜົນໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ເພື່ອວາງມາດຕະການແກ້ໄຂໃນຕໍ່ໜ້າ;

4. ອອກແຈ້ງການໃຫ້ຄຳແນະນຳຕ່າງໆຕາມພາລະບົດບາດຕໍ່ບັນດາຂະແໜງການ ແລະ ສູນສິ່ງເສີມອ້ອມຂ້າງພະແນກ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດທຸລະກິດກະສິກຳ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;

5. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາປະຊາຊົນແຫ່ງຊາດ, ສະພາປະຊາຊົນແຂວງ, ລັດຖະບັນຍັດ, ດຳລັດ ແລະ ມະຕິຕົກລົງຂອງລັດຖະບານ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບດິນກະສິກຳ ໃນເຂດຊົນລະປະທານ ທີ່ຂັ້ນເທິງວາງອອກ;

6. ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດຂອງຂະແໜງກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ທີ່ສອດຄ່ອງທ່າແຮງທ້ອງຖິ່ນ ພ້ອມທັງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃນເຂດຊົນລະປະທານ ແລະ ຈັດຕັ້ງປະຕິບັດຂັ້ນແຂວງ, ເມືອງ ແລະ ຮາກຖານໃຫ້ໄດ້ຮັບຜົນດີ;

7. ຄົ້ນຄວ້າ, ປະກອບຄຳເຫັນດ້ານວິຊາການໃນການອະນຸມັດການຫັນປ່ຽນທີ່ດິນກະສິກຳໃນເຂດຊົນລະປະທານ ໄປສູ່ເປົ້າໝາຍອື່ນ;

8. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ, ແຜນດຳເນີນງານ,ບັນດາແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ຂອງຜູ້ປະກອບການໃນຄວາມຮັບຜິດຊອບຂອງຕົນຢ່າງຕໍ່ເນື່ອງເພື່ອໃຫ້ເກີດຜົນປະໂຫຍດສູງສຸດ;

9. ຄຸ້ມຄອງ, ພັດທະນາລະບົບຊົນລະປະທານ ແລະ ການລະບາຍນ້ຳ ເພື່ອເຮັດໃຫ້ການສະໜອງນ້ຳ ແລະ ນຳໃຊ້ໃຫ້ມີປະສິດທິຜົນສູງ;

10. ດຳເນີນການສຳຫຼວດ, ຈັດສັນກຳນົດແບ່ງເຂດດິນກະສິກຳ,ດິນເຂດສ້າງຊົນລະປະທານພ້ອມທັງຄົ້ນຄວ້ານຳສະເໜີຂຶ້ນທະບຽນທີ່ດິນດັ່ງກ່າວ ໂດຍມີການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງນຳໃຊ້ຢ່າງຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

11. ເປັນເຈົ້າການໂຄສະນາເຜີຍແຜ່, ເຊື່ອມຊຶມ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ;

ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໃນມາດຕາ 14 ແມ່ນໃຊ້ສະເພາະຂໍ້ຕົກລົງສະບັບນີ້.

**ມາດຕາ 15. ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ.**

**ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງມີສິດ ແລະໜ້າທີ່ດັ່ງນີ້:**

1. ຕົກລົງ ແລະ ມອບໝາຍແຜນການ, ງົບປະມານ, ອຸປະກອນ, ພາຫະນະທີ່ໄດ້ຮັບອະນຸມັດຈາກຂັ້ນເທິງໃຫ້ແກ່ໜ່ວຍງານ, ສູນບໍລິການເຕັກນິກ ແລະ ໂຄງການທີ່ຂຶ້ນກັບຕົນ;

2. ສະເໜີ ອະນຸມັດສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກກຸ່ມຜະລິດ, ສະມາຄົມ, ສະຫະກອນຫືອໜ່ວຍການຜະລິດກະສິກຳ ແລະ ປ່າໄມ້ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

3. ປະກອບຄຳເຫັນຕໍ່ຄຳຮ້ອງຂໍລົງທຶນພາຍໃນ ເພື່ອການນຳໃຊ້ທີ່ດິນກະສິກຳ, ແຫຼ່ງນ້ຳ ແລະ ຊັບພະຍາກອນທຳມະຊາດໃນການປູກຝັງ, ລ້ຽງສັດ, ປູກໄມ້, ການກໍ່ສ້າງຊົນລະປະທານ ແລະ ອື່ນໆ;

4. ຊີ້ນຳການຈັດຕັ້ງ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນງານ, ແຜນການໂຄງການທີ່ກະຊວງ ແລະ ແຂວງ ມອບໃຫ້ພ້ອມທັງຄົ້ນຄວ້າດ້ານດີ, ດ້ານອ່ອນວາງມາດຕະການແກ້ໄຂ;

5. ປະສານສົມທົບກັບອຳນາດການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນທ້ອງຖິ່ນຕົນ ເພື່ອຄຸ້ມຄອງນຳໃຊ້ທີ່ດິນກະສິກຳໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

6. ເປັນເຈົ້າການໃນການລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດດິນກະສິກຳ ແລະ ຂຶ້ນສຳມະໂນທີ່ດິນກະສິກຳ ໃນແຕ່ລະເຂດ (ເຂດຜະລິດສະບຽງ, ເຂດຜະລິດສິນຄ້າ ແລະ ເຂດສະຫງວນທີ່ດິນກະສິກຳ) ໃຫ້ຖືກຕ້ອງແລະ ຊັດເຈນ;

7. ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງໃນການທົບທວນບົດວິພາກເສດຖະກິດ-ເຕັກນິກ, ການປະເມີນຜົນກະທົບຕໍ່ສັງຄົມ, ທຳມະຊາດ ແລະ ສິ່ງແວດລ້ອມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳພ້ອມທັງຕິດຕາມກວດກາການນຳໃຊ້ທີ່ດິນກະສິກຳຂອງນັກລົງທຶນ ແລະຜູ້ປະກອບການໃຫ້ຖືກຕ້ອງຕາມສັນຍາ ແລະ ກົດໝາຍ;

8. ສະເໜີ, ລາຍງານ ສະພາບການເຄື່ອນໄຫວວຽກງານຂອງຕົນຕໍ່ອົງການປົກຄອງເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດແຕ່ລະໄລຍະໃຫ້ໄດ້ຮັບຜົນດີ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ;

**ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໃນມາດຕາ 15 ແມ່ນໃຊ້ສະເພາະຂໍ້ຕົກລົງສະບັບນີ້.**

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງໜ່ວຍງານກະສິກຳບ້ານ.**

**ໜ່ວຍງານກະສິກຳບ້ານມີສິດ ແລະ ໜ້າທີ່ດັ່ງນີ້:**

1. ມີສິດໄດ້ຮັບຂໍ້ມູນຂ່າວສານ, ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ ພ້ອມທັງເຜີຍແຜ່, ປຸກລະດົມ ແລະ ນຳພາຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

2. ສົມທົບກັບອຳນາດການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານໃຫ້ຖືກຕ້ອງ ແທດເໝາະກັບເງື່ອນໄຂບ້ານຂອງຕົນ;

3. ເຂົ້າຮ່ວມໃນການລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດດິນກະສິກຳ ແລະ ຂຶ້ນສຳມະໂນທີ່ດິນກະສິກຳກັບພາກສ່ວນທີ່ກ່ຽວຂ້ອງໃນບ້ານຂອງຕົນ;

4. ສະເໜີ, ລາຍງານສະພາບການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ ຕໍ່ອົງການປົກຄອງເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ;

**ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໃນມາດຕາ 16 ແມ່ນໃຊ້ສະເພາະຂໍ້ຕົກລົງສະບັບນີ້.**

**ມາດຕາ 17. ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ ໂດຍຂະແໜງການທີ່ກ່ຽວຂ້ອງ.**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຮັບຜິດຊອບໂດຍກົງໃນການຄຸ້ມຄອງທີ່ດິນກະສິກຳໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເຊັ່ນ: ການກຳນົດຂອບເຂດຕ້ອງໄດ້ປະສານກັບພະແນກພາຍໃນ, ຫ້ອງການພາຍໃນເມືອງ, ການສຳຫຼວດ, ການຈັດສັນ, ການແຕ້ມແຜນທີ່ດິນ ແລະ ການອອກໃບຕາດິນຕ້ອງໄດ້ປະສານກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ.

## ໝວດທີ V
## ຂໍ້ຫ້າມ

**ມາດຕາ 18. ຂໍ້ຫ້າມທົ່ວໄປ.**

**ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳດັ່ງລຸ່ມນີ້:**

- ຫ້າມຫັນປ່ຽນທີ່ດິນກະສິກຳໃນເຂດຊົນລະປະທານ ໂດຍບໍ່ໄດ້ຮັບອະນຸຍາດຈາກພະແນກກະສິກຳ ແລະ ປ່າໄມ້ຢ່າງເດັດຂາດ;
- ບໍ່ທຳການຜະລິດຫຼືປະເປັນເຮື້ອ;
- ຫ້າມຊື້ຈ້າງ, ໃຫ້ສິນບົນ, ບັງຂັບໝາບຂູ່;
- ດຳເນີນທຸລະກິດບໍ່ຢູ່ໃນການອະນຸຍາດ;
- ໂອນໃບອະນຸຍາດໃຫ້ບຸກຄົນອື່ນ;
- ກົດໜ່ວງຖ່ວງດຶງຕໍ່ລະດູການຜະລິດ.

**ມາດຕາ 19. ຂໍ້ຫ້າມສຳລັບພະນັກງານ.**

**ຫ້າມພະນັກງານ,ເຈົ້າໜ້າຂອງລັດມີພຶດຕິກຳດັ່ງລຸ່ມນີ້:**

1. ສວຍໃຊ້ສິດ ໜ້າທີ່ເກີນຂອບເຂດ,ນາບຂູ່, ກົດໜ່ວງຖ່ວງດຶງ ເອກະສານ,
2. ປະລະໜ້າທີ່, ເລີ່ນເລີ້, ເມີນເສີຍ;
3. ທວງເອົາ, ຂໍເອົາ, ຮັບສິນບົນ,ໃຫ້ສິນບົນ;

4. ມີພຶດຕິກຳທີ່ຜິດຕໍ່ລະບຽບກົດໝາຍ.

## ໝວດທີ VI
## ອົງການກວດກາ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.

**ມາດຕາ 20.** ອົງການກວດກາ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.

ອົງການກວດກາ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານມີໜ້າທີ່ດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ປະກອບມີ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ໜ່ວຍງານກະສິກຳບ້ານ;

2. ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ,ອົງການກວດສອບປະຈຳພາກກາງ, ພະແນກກວດກາລັດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 21.** ເນື້ອໃນກວດກາ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.

1. ຈັດຕັ້ງການກວດກາ, ໜ້າວຽກ, ອຳນວຍຄວາມສະດວກ, ຄວບຄຸມ ແລະ ຕິດຕາມການເຄື່ອນໄຫວປະຕິບັດໜ້າທີ່ໃນການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ;

2. ພິຈາລະນາ, ໃຫ້ຄຳແນະນຳ, ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ ໃຫ້ຖືກຕ້ອງ ແລະ ເປັນທຳ.

**ມາດຕາ 22.** ຮູບການກວດກາການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານ.

ຮູບການກວດກາ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນເຂດຊົນລະປະທານມີ 3 ຮູບການ ມີດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ, ແຜນງານ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນ, ມີຄວາມຈຳເປັນຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກວດກາຊາບລ່ວງໜ້າ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23.** ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີຜົນງານປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ຊຸກຍູ້ສົ່ງເສີມ, ພັດທະນາທີ່ດິນກະສິກຳຕາມລະບຽບ, ຫຼັກການ, ມີຄວາມຍືນຍົງລວມທັງຜູ້ໃຫ້ຂໍ້ມູນກ່ຽວກັບທີ່ດິນກະສິກຳໃນເຂດຊົນລະປະທານ ພວມຖືກບຸກລຸກ ຫຼື ຖືກທຳລາຍຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆຕາມຄວາມເໝາະສົມ.

**ມາດຕາ 24.** ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍ ຫຼື ດຳເນີນຄະດີ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 25. ມາດຕະການສຶກສາອົບຮົມ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ເປັນຕົ້ນຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າຕ່ຳກ່ວາ ຫ້າແສນກີບ ແຕ່ຫາກບໍ່ມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ສິ່ງຊັບສິນ ຫຼື ຂອງກາງທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນ ຢ່າງຄົບຖ້ວນ.

**ມາດຕາ 26. ມາດຕະການທາງວິໄນ.**

ພະນັກງານ ແລະ ເຈົ້າໜ້າທີ່ທີ່ໄດ້ລະເມີດລະບຽບຂໍ້ຕົກລົງສະບັບນີ້, ຂໍ້ຫ້າມທີ່ມີລັກສະນະເບົາຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕ່ຳກວ່າ ຫ້າແສນກີບ ແຕ່ຫາກບໍ່ມີຄວາມຈິງໃຈລາຍງານ, ຫຼົບຫລີກຈາກຄວາມຜິດຂອງຕົນຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີໜ້າທີ່ຕຳແໜ່ງຕ່ຳກ່ວາ;
4. ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ, ພ້ອມສິ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 27. ມາດຕະການປັບໄໝ.**

ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ເປັນຕົ້ນຂໍ້ຫ້າມທີ່ບໍ່ມີອົງປະກອບການກະທຳຜິດທາງອາຍາ ແລະ ໄດ້ກ່າວເຕືອນມາກ່ອນແລ້ວກໍຈະຖືກປັບໄໝເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຫຼື ຄ່ານ້ຳ, ຄ່າກະແສໄຟຟ້າ, ໃນກໍລະນີທີ່ມີການລະເມີດຄັ້ງທີສອງຈະຖືກປັບໄໝ ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຫຼື ຄ່ານ້ຳ, ຄ່າກະແສໄຟຟ້າທີ່ຕົນຈະຕ້ອງໄດ້ຈ່າຍ.

**ມາດຕາ 28. ມາດຕະການທາງແພ່ງ.**

ບຸກຄົນ, ນິຕິບຸກຄົນຫຼືການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດຂອງຊາວກະສິກອນ ແລະ ປະຊາຊົນຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 29. ມາດຕະການທາງອາຍາ.**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ຊຶ່ງເປັນການກະທຳຜິດທາງອາຍາຈະຖືກດຳເນີນຄະດີ ແລະ ລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 30. ການຈັດຕັ້ງປະຕິບັດ.**

ອົງການປົກຄອງແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພາກສ່ວນທີ່ກ່ຽວຂ້ອງ, ໜ່ວຍງານກະສິກຳບ້ານ, ຈົ່ງພ້ອມກັນຈັດຕັ້ງຜັນຂະຫຍາຍ, ເຊື່ອມຊຶມ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ

ໃນການຈັດຕັ້ງປະຕິບັດຕົວຈິງມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ຂຶ້ນບັນຊີສະຖິຕິ ດິນກະສິກຳເຂດຊົນລະປະທານໃນທົ່ວແຂວງໃຫ້ມີຄວາມຊັດເຈນ

**ມາດຕາ 31. ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ທ່ານເຈົ້າແຂວງລົງລາຍເຊັນເປັນຕົ້ນໄປ

ຂໍ້ຕົກລົງ ແລະ ແຈ້ງການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ ບໍລິຄຳໄຊ**

ປອ. ກອງແກ້ວ ໄຊສົງຄາມ